ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ເລກທີ 1142/ຖວທ.ນວ

ວັນທີ 20 AUG 2024

# ແຈ້ງການ

ເຖິງ : ບັນດາທ່ານ ຜູ້ປະກອບການຈຳໜ່າຍພຣະພຸດທະຮູບ, ວັດຖຸມຸງຄຸນ, ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ທີ່ຢູ່ພາຍໃນນະຄອນຫຼວງວຽງຈັນ.

ເລື່ອງ : ຫ້າມການນຳເຂົ້າພຣະພຸດທະຮູບ ແລະ ວັດຖຸມຸງຄຸນ ຈາກຕ່າງປະເທດເຂົ້າມາບູຊາ ແລະ ຈຳໜ່າຍຢູ່ພາຍໃນ ນະຄອນຫຼວງວຽງຈັນ.

- ອີງຕາມ ກົດໝາຍວ່າດ້ວຍມໍລະດົກແຫ່ງຊາດ(ສະບັບປັບປຸງ), ສະບັບເລກທີ 11/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍວິຈິດສິນ, ສະບັບເລກທີ 19/ສພຊ, ລົງວັນທີ 7 ກໍລະກົດ2022;
- ອີງຕາມ ດຳລັດວ່າດ້ວຍການຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວສາສະໜາ ຢູ່ ສປປລາວ, ສະບັບເລກທີ 315/ລບ, ລົງວັນທີ 16 ສິງຫາ 2016;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ນະຄອນຫຼວງວຽງຈັນ, ສະບັບເລກທີ 570/ຈນວ, ລົງວັນທີ 25 ພຶດສະພາ 2023;

ເພື່ອເຮັດໃຫ້ການຄຸ້ມຄອງ, ການຕິດຕາມກວດກາ ການນຳເຂົ້າ ພຣະພຸດທະຮູບ ແລະ ວັດຖຸມຸງຄຸນ ຈາກຕ່າງປະເທດເຂົ້າມາຈຳໜ່າຍຢູ່ພາຍໃນນະຄອນຫຼວງວຽງຈັນ ແລະ ເພື່ອເປັນການອະນຸລັກ, ປົກປັກຮັກສາ, ໂຄສະນາ , ສົ່ງເສີມຮູບແບບສິລະປະລວດລາຍທີ່ເປັນເອກະລັກຂອງພຣະພຸດທະຮູບ ແລະ ວັດຖຸມຸງຄຸນລາວ ພາຍໃນນະຄອນຫຼວງວຽງຈັນ ໃຫ້ເປັນເອກະລັກຂອງນະຄອນຫຼວງວຽງຈັນ, ກໍຄືຂອງຊາດໃຫ້ມີຄວາມຍືນຍົງເຊັ່ນລູກເຊັ່ນຫຼານຕະຫຼອດໄປ.

ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ນະຄອນຫຼວງວຽງຈັນ ອອກແຈ້ງການ ດັ່ງນີ້:

## I. ຈຸດປະສົງລະດັບຄາດໝາຍ.

ເພື່ອເປັນການສົ່ງເສີມຝີມືຂອງນາຍຊ່າງລາວ, ສົ່ງເສີມຮູບແບບສິລະປະລວດລາຍທີ່ເປັນເອກະລັກຂອງພຣະພຸດທະຮູບ ແລະ ວັດຖຸມຸງຄຸນລາວ ຢູ່ພາຍໃນນະຄອນຫຼວງວຽງຈັນ ກໍຄືຂອງຊາດ ໃຫ້ເປັນເອກະລັກສະເພາະຂອງສິລະປະລາວ.

## II. ເງື່ອນໄຂການນຳເຂົ້າພຣະພຸດທະຮູບຈາກຕ່າງປະເທດ.

1. ບຸກຄົນ, ນິຕິບຸກຄົນ ທີ່ມີຈຸດປະສົງຂໍອະນຸຍາດນໍາເຂົ້າພຣະພຸດທະຮູບ ແລະ ວັດຖຸມຸງຄຸນ ຈາກຕ່າງປະເທດ ຕ້ອງໄປຊື້ແບບຟອມຢູ່ ພະແນກ ຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ນະຄອນຫຼວງວຽງຈັນ.
2. ການປະກອບເອກະສານສະເໜີຂໍອະນຸຍາດນໍາເຂົ້າພຣະພຸດທະຮູບ ແລະ ວັດຖຸມຸງຄຸນ ຈາກຕ່າງປະເທດ ຊ້າສຸດ 2 ອາທິດກ່ອນກ່ອນມື້ນໍາເຂົ້າຕົວຈິງ, ຖ້າບໍ່ປະຕິບັດຕາມການກໍານົດນີ້ຈະບໍ່ຮັບພິຈາລະນາເອກະສານ.
3. ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ຂໍອະນຸຍາດນໍາເຂົ້າພຣະພຸດທະຮູບ ແລະ ວັດຖຸມຸງຄຸນ ຈາກຕ່າງປະເທດ ທີ່ເປັນເອກະລັກຂອງລາວ ຫຼື ເອົາແບບຂອງພຣະພຸດທະຮູບ ແລະ ວັດຖຸມຸງຄຸນລາວໄປຫຼໍ່ຢູ່ຕ່າງປະເທດ ເທົ່ານັ້ນຈຶ່ງສາມານໍາເຂົ້າມາຢູ່ພາຍໃນນະຄອນຫຼວງວຽງຈັນໄດ້.

III. ຂໍ້ຫ້າມ.

1. ຫ້າມນໍາເຂົ້າພຣະພຸດທະຮູບ ແລະ ວັດຖຸມຸງຄຸນຈາກຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດ ຈາກພະແນກ ຖະແຫຼງຂ່າວ,ວັດທະນະທໍາ ແລະ ທ່ອງທ່ຽວ ນະຄອນຫຼວງວຽງຈັນ ຢ່າງເດັດຂາດ.
2. ຫ້າມນໍາເຂົ້າພຣະພຸດທະຮູບ ແລະ ວັດຖຸມຸງຄຸນ ຈາກຕ່າງປະເທດ ທີ່ມີພາສາ ແລະ ສັນຍາລັກທີ່ບໍ່ຖືກຕ້ອງສອດຄ່ອງກັບລະບຽບກົດໝາຍ ແລະ ຮີດຄອງປະເພນີ ຂອງ ສປປລາວຢ່າງເດັດຂາດ.
3. ຫ້າມມີພຶດຕິກໍາອື່ນໆທີ່ເປັນການລະເມີດລະບຽບ, ກົດໝາຍ ຂອງ ສປປ ລາວ.

IV. ມາດຕະການຕໍ່ຜູ້ລະເມີດ.

1. ສຶກສາອົບຮົມຄັ້ງທີ 1 ແລະ ປັບໄໝ 3,000,000-5,000,000 ກີບ.
2. ສຶກສາອົບຮົມຄັ້ງທີ 2 ແລະ ປັບໄໝ 5,000,000-10,000,000 ກີບ.
3. ສຶກສາອົບຮົມຄັ້ງທີ 3 ແລະ ປັບໄໝ 10,000,000-15,000,000 ກີບ, ພ້ອມກັບນໍາຕົວຜູ້ລະເມີດໄປດໍາເນີນຄະດີ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ.
4. ສ່ວນພຣະພຸດທະຮູບທີ່ນໍາເຂົ້າມາແບບບໍ່ຖືກຕ້ອງຜູ້ລະເມີດຕ້ອງໄດ້ຮັບຜິດຊອບຄ່າໃຊ້ຈ່າຍທັງໝົດພ້ອມດ້ວຍການດໍາເນີນເອກະສານໃນການສົ່ງກັບຄືນປະເທດທີ່ໄດ້ນໍາເຂົ້າມາ.

ດັ່ງນັ້ນ, ຈຶ່ງອອກແຈ້ງການມາເພື່ອໃຫ້ຜູ້ປະກອບການຈໍາໜ່າຍພຣະພຸດທະຮູບ, ວັດຖຸມຸງຄຸນ, ບຸກຄົນ, ນິຕິບຸກຄົນ, ທີ່ຢູ່ພາຍໃນນະຄອນຫຼວງວຽງຈັນ ໃຫ້ພ້ອມກັນປະຕິບັດແຈ້ງການສະບັບນີ້ຢ່າງເຂັ້ມງວດ.

ຫົວໜ້າພະແນກ

ບ່ອນສົ່ງ:

- ຫ້ອງການ ຖວທ 09 ເມືອງ.
- ດ່ານສາກົນສະໜາມບິນວັດໄຕ.
- ດ່ານຂົວມິດຕະພາບລາວ-ໄທ 1.
- ດ່ານປະເພນີຕ່າງໆທີ່ມີຊາຍແດນຕິດກັບນະຄອນຫຼວງວຽງຈັນ.
- ສໍາເນົາເກັບມ້ຽນ 03 ສະບັບ.

ພະແນກ ຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ

ວຽງພອນ ແກ້ວຄູນສີ